ວັນທີ 21/11/2016

**ບົດກ່າວໄຂກອງປະຊຸມ**
**ຂອງພະນະທ່ານ ສົມດີ ດວງດີ**
**ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງການເງິນ**
**ກ່າວໄຂກອງປະຊຸມໂຕະມົນປະຈຳປີ 2016**
**ທີ່ ຫ້ອງວ່າການປົກຄອງແຂວງວຽງຈັນ, ແຂວງວຽງຈັນ. ວັນທີ 25 ພະຈິກ 2016**

---

- **ທ່ານ ເຈົ້າແຂວງ ແຂວງວຽງຈັນ. ທີ່ນັບຖື,**
- **ບັນດາທ່ານ ລັດຖະມົນຕີ / ຮອງລັດຖະມົນຕີ, ຜູ້ຕາງໜ້າຈາກກະຊວງ/ຂະແໜງການຈາກສູນກາງ ແລະ ທ້ອງຖິ່ນ. ທີ່ຮັກແພງ,**
- **ບັນດາທຸຕານຸທູດ, ຜູ້ຕາງໜ້າອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາ**
- **ບັນດາທ່ານ ຍິງ ແລະ ທ່ານຊາຍ ທີ່ຮັກແພງທັງຫຼາຍ,**

**ຂ້າພະເຈົ້າ ມີຄວາມພາກພູມໃຈ ແລະ ຂໍສະແດງຄວາມຍິນດີເປັນຢ່າງຍິ່ງທີ່ໄດ້ຕາງໜ້າໃຫ້ລັດຖະບານແຫ່ງ ສປປ ລາວ ກ່າວຕ້ອນຮັບອັນອົບອຸ່ນມາຍັງທ່ານທຸຕານຸທູດ, ຜູ້ຕາງໜ້າບັນດາອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາ ທີ່ໄດ້ໃຫ້ກຽດ ແລະ ເສຍສະລະເວລາອັນມີຄຸນຄ່າມາຮ່ວມກອງປະຊຸມກ່ຽວກັບການຈັດຕັ້ງປະຕິບັດຂະບວນການໂຕະມົນປະຈຳປີ 2016 ໃນມື້ນີ້,ພາຍໃຕ້ຫົວຂໍ້: "ເລັ່ງລັດຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ່ VIII (2016-2020) ເພື່ອນຳພາປະເທດຫລຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ແລະ ບັນລຸເປົ້າໝາຍການພັດທະນາແບບຍືນຍົງ".**

**ຂ້າພະເຈົ້າ ຂໍຖືໂອກາດນີ້ ສະແດງຄວາມຊົມເຊີຍ ແລະ ຂອບໃຈຢ່າງສູງ ມາຍັງການນຳແຂວງວຽງຈັນ, ກະຊວງແຜນການ ແລະ ການລົງທຶນ, ອົງການສະຫະປະຊາ**

**ຊາດ ເພື່ອການພັດທະນາ ກໍ່ຄືບັນດາອົງການເຄື່ອຂ່າຍສະຫະປະຊາຊາດ ແລະ ຄູ່ຮ່ວມພັດທະນາ ທີ່ໄດ້ໃຫ້ການສະໜັບສະໜູນ ແລະ ຮ່ວມມືຢ່າງໃກ້ຊິດ ກັບບັນດາກະຊວງ ຂະແໜງການກ່ຽວຂ້ອງ ໃນການກະກຽມ ແລະ ຈັດກອງປະຊຸມໂຕະມົນ 2016 ຢູ່ແຂວງວຽງຈັນນີ້ ເປັນຢ່າງດີ.**

***ບັນດາທ່ານ ແຂກຜູ້ມີກຽດ,***

***ທ່ານ ຍິງ ແລະ ທ່ານ ຊາຍ,***

**ກອງປະຊຸມໂຕະມົນປະຈຳປີ 2016 ນີ້ ແມ່ນກອງປະຊຸມທີ່ສຳຄັນຫລາຍ ເພາະວ່ານອກຈາກຈະເປັນການຈັດຕັ້ງຜັນຂະຫຍາຍຜົນຂອງ ກອງປະຊຸມໂຕະມົນລະດັບສູງ ຄັ້ງທີ 12 ທີ່ໄດ້ຈັດຂຶ້ນໃນປີ 2015 ທີ່ຜ່ານມາແລ້ວ ຍັງແມ່ນກອງປະຊຸມຄັ້ງທຳອິດທີ່ພວກເຮົາຈະໄດ້ລົງເລິກການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາ ແບບຍືນຍົງ ຫລື SDGs ເວົ້າລວມ, ເວົ້າສະເພາະແມ່ນຜົນການຈັດຕັ້ງປະຕິບັດປີທຳອິດຂອງແຜນພັດທະນາເສດຖະກິດ-ສັງຄົມ 05 ຄັ້ງທີ VIII ຂອງລັດຖະບານ. ສະນັ້ນ,ກອງປະຊຸມຄັ້ງນີ້ຈະໄດ້ສຸມໃສ່ວຽກງານຈຸດສຸມບູລິມະສິດ ຄື: (1) ວຽກງານການເຊື່ອມສານເປົ້າໝາຍການພັດທະນາແບບຍືນຍົງ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ VIII, (2) ວຽກງານການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ, (3) ວຽກງານກ່ຽວກັບການເຕີບໂຕສີຂຽວ, ການປ່ຽນແປງດິນຟ້າອາກາດ ແລະ ການກຽມຄວາມພ້ອມຮັບມືໄພພິບັດທຳມະຊາດຕ່າງໆ ແລະ (4) ວຽກງານການເປັນຄູ່ຮ່ວມເພື່ອການພັດທະນາທີ່ມີປະສິດທິຜົນ ກອງປະຊຸມຈະໄດ້ຮັບຟັງການນຳສະເໜີກ່ຽວກັບຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ສົກປີ 2015-2016 ເຊິ່ງເປັນສົກປີທຳອິດ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-**

**ສັງຄົມ ຄັ້ງທີ VIII ໂດຍເລັ່ງໃສ່ການແກ້ໄຂ ຄວາມທຸກຍາກຂອງປະຊາຊົນ ແລະ ການປະຕິບັດບັນດາເງື່ອນໄຂຕ່າງໆເພື່ອຮັບປະກັນນໍາພາ ສປປ ລາວ ອອກຈາກສະຖານະພາບປະເທດດ້ອຍພັດທະນາໃນປີ 2020 ເປັນບູລິມະສິດ. ນອກຈາກນັ້ນ, ກໍ່ຍັງຈະໄດ້ຮັບຟັງການລາຍງານຜົນການປຶກສາຫາລືຈາກ 4 ກຸ່ມສົນທະນາ ທີ່ຈັດຂຶ້ນໃນມື້ວັນທີ 24 ພະຈິກ 2016 ທີ່ຜ່ານມາ.**

**ການຈັດກອງປະຊຸມໂຕະມົນປະຈໍາປີ 2016 ທີ່ຈັດຂຶ້ນຢູ່ທີ່ແຂວງວຽງຈັນ ໃນຄັ້ງນີ້ ແມ່ນມີເນື້ອໃນ ແລະ ຈິດໃຈອັນມີຄວາມໝາຍຄວາມສໍາຄັນຢ່າງຍິ່ງ ເຊິ່ງເປັນການແນ່ໃສ່ການລະດົມທຶນ ເພື່ອການພັດທະນາທ້ອງຖິ່ນ ໂດຍອີງໃສ່ປັດໃຈທ່າແຮງບົ່ມຊ້ອນທີ່ມີຢູ່ ຕາມທິດແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງວຽງຈັນ ເຊິ່ງທາງແຂວງວຽງຈັນກໍ່ໄດ້ນໍາສະເໜີໃຫ້ຊາບໃນມື້ວານນີ້ ອັນໄດ້ສະແດງໃຫ້ເຫັນວ່າລັດຖະບານ ໄດ້ມີຄວາມພະຍາຍາມພັດທະນາທ້ອງຖິ່ນໃຫ້ມີຄວາມເຂັ້ມແຂງຮອບດ້ານຢ່າງຕັ້ງໜ້າ ຕາມທິດຂອງນະໂຍບາຍ 3 ສ້າງ ກໍ່ຄືສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານ ເປັນຫົວໜ່ວຍພັດທະນາ.**

***ບັນດາທ່ານ ແຂກຜູ້ມີກຽດ,***

***ທ່ານ ຍິງ ແລະ ທ່ານ ຊາຍ,***

**ຕະຫລອດໄລຍະໜຶ່ງປີຜ່ານມາ ລັດຖະບານລາວ ໄດ້ມີຄວາມພະຍາຍາມສູງ ໃນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ສົກປີ 2015-2016 ໃຫ້ມີປະສິດທິຜົນ, ເຊິ່ງສະແດງອອກໃນບາງຜົນສໍາເລັດດັ່ງນີ້: ມີສະຖຽນລະພາບທາງດ້ານການເມືອງ ແລະ ຄວາມສະຫງົບຢ່າງໜັກແໜ້ນ, ອັດຕາການເຕີບໂຕທາງດ້ານເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ລວມຍອດຜະລິດຕະພັນພາຍໃນ (GDP) ໄລຍະ 10 ເດືອນ ປະຕິບັດໄດ້ 6,9% ແລະ ໝົດປີ 2016 ຈະສາມາດບັນລຸໄດ້**

**7%, ລາຍໄດ້ຕໍ່ຫົວຄົນເພີ່ມຂຶ້ນຈາກ 1.970 ໂດລາສະຫະລັດໃນສົກປີ 2014-2015 ມາເປັນ 2.027 ໂດລາສະຫະລັດ ໃນສົກປີການປະຕິບັດ 2015-2016. ນະໂຍບາຍເງິນຕາມີສະຖຽນລະພາບໂດຍພື້ນຖານ, ການລົງທຶນຂອງພາກທຸລະກິດມີບັນຍາກາດຟືດຟື້ນຂຶ້ນ, ການພັດທະນາວຽກງານວັດທະນະທຳ-ສັງຄົມ ຕິດພັນກັບການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ກໍ່ໄດ້ຮັບການພັດທະນາຢ່າງກ້ວາງຂວາງ ແລະ ເຂົ້າສູ່ລວງເລິກກວ່າເກົ່າ ເຮັດໃຫ້ຄອບຄົວທຸກຍາກໄດ້ມີທ່າອ່ຽງຫລຸດລົງເປັນກ້າວໆ, ຄອບຄົວພັດທະນາເພີ່ມຂຶ້ນ, ບ້ານ 3 ສ້າງໄດ້ເຮັດທົດລອງ ເປັນບ້ານພັດທະນາໄດ້ເຖິງ 93 ບ້ານ ໃນ 109 ບ້ານທົດລອງ ອັນປະກອບສ່ວນສຳຄັນເຂົ້າໃນການບັນລຸຫລາຍຕົວຊີ້ວັດທາງດ້ານການພັດທະນາແບບຍືນຍົງ ແລະ ຫລຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ.**

**ເຖິງຢ່າງໃດກໍ່ດີ, ເສດຖະກິດຂອງ ສປປ ລາວ ກໍ່ຍັງໄດ້ຮັບຜົນກະທົບຈາກຄວາມຜັນແປຂອງເສດຖະກິດໂລກ ແລະ ພາກພື້ນ ເປັນຕົ້ນແມ່ນ: ການຫລຸດລົງລາຄາສິນຄ້າບາງປະເພດໃນຕະຫລາດສາກົນ ເຊັ່ນ: ວັດຖຸດິບແຮ່ທາດ, ຢາງພາລາ ແລະ ອື່ນໆ, ການເໜັງຕີງຂອງລາຄານ້ຳມັນ. ນອກຈາກນີ້ ບັນຫາໄພພິບັດທຳມະຊາດ ທີ່ໄດ້ສົ່ງຜົນກະທົບ ຕໍ່ຜະລິດຕະພັນກະສິກຳ ແລະ ສິນຄ້າສົ່ງອອກກໍ່ໜັກໜ່ວງ, ເຮັດໃຫ້ການເກັບລາຍຮັບງົບປະມານແຫ່ງລັດບໍ່ໄດ້ຕາມແຜນ, ບັນຫາການຄຸ້ມຄອງເສດຖະກິດມະຫາພາກຍັງບອບບາງ, ການເພີ່ມແຫລ່ງທຶນເພື່ອຊຳລະໜີ້ໂຄງການລົງທຶນຂອງລັດຍັງມີຈຳກັດ, ຕົວແບບການຜະລິດສິນຄ້າຢູ່ທ້ອງຖິ່ນຕ່າງໆຍັງມີໜ້ອຍ ແລະ ຍັງບໍ່ທັນພົ້ນເດັ່ນເທົ່າທີ່ຄວນ, ການພັດທະນາການສຶກສາຢູ່ເຂດຊົນນະບົດຫ່າງໄກສອກຫລີກຫລາຍແຫ່ງຍັງບໍ່ທັນເຮັດໄດ້ດີ ຍັງຂາດງົບປະມານ ແລະ ອຸປະກອນຕ່າງໆ, ການໃຫ້ບໍລິການສາທາລະນະສຸກຍັງບໍ່ທັນໄດ້ດີເທົ່າທີ່ຄວນ ແລະ ການຍົກ**

**ລະດັບສ້າງສີມືແຮງງານລາວໃຫ້ມີປະສິດທິພາບສູງຍັງປະຕິບັດບໍ່ໄດ້ດີ ແລະ ອື່ນໆ ທີ່ໄດ້ເຮັດໃຫ້ການປະຕິບັດບາງຄາດໝາຍ ບໍ່ສາມາດບັນລຸຕາມແຜນທີ່ວາງໄວ້.**

***ບັນດາທ່ານທີ່ນັບຖື ແລະ ຮັກແພງ,***

**ເພື່ອຮັບມືກັບສິ່ງທ້າທາຍດັ່ງກ່າວ, ຂ້າພະເຈົ້າໃນນາມຕາງໜ້າໃຫ້ລັດຖະບານແຫ່ງ ສປປ ລາວ ສະເໜີໃຫ້ບັນດາກະຊວງຂະແໜງການທີ່ກ່ຽວຂ້ອງ ແລະ ຄູ່ຮ່ວມພັດທະນາທີ່ເຂົ້າຮ່ວມກອງປະຊຸມ ໂຕະມົນປະຈຳປີນີ້ ສຸມໃສ່ສົນທະນາ ແລະ ແລກປ່ຽນຄວາມຄິດຄວາມເຫັນນຳກັນ ຢ່າງກົງໄປກົງມາ, ສ້າງສັນ ເພື່ອພ້ອມກັນຊອກຫາສາເຫດ ແລະ ວິທີການແກ້ໄຂຮ່ວມກັນ ແນ່ໃສ່ເຮັດໃຫ້ເສດຖະກິດ ແຫ່ງຊາດມີຄວາມເຂັ້ມແຂງ ແລະ ໝັ້ນທ່ຽງຍິ່ງຂຶ້ນ, ພ້ອມກັນສືບຕໍ່ຊອກຊ່ອງທາງຂຸດຄົ້ນຊອກຫາທ່າແຮງທີ່ບົ່ມຊ້ອນພາຍໃນ, ເປັນຕົ້ນແມ່ນການເພີ່ມແຫຼ່ງລາຍຮັບ, ການສ້າງຂີດຄວາມຮູ້ຄວາມສາມາດທາງດ້ານວິຊາການ ໃນການບໍລິຫານຈັດການທາງດ້ານເສດຖະກິດການຜະລິດໃຫ້ທັນສະໄໝ ທີ່ແທດເໝາະ ເພື່ອຕອບສະໜອງໄດ້ຄວາມຮຽກຮ້ອງຕ້ອງການຂອງການພັດທະນາໃນໄລຍະໃໝ່ ຕາມທິດພັດທະນາສີຂຽວ ແລະ ສາມາດເຊື່ອມໂຍງດ້ານເສດຖະກິດເຂົ້າກັບພາກພື້ນ ແລະ ສາກົນ ແນ່ໃສ່ບັນລຸເປົ້າໝາຍການພັດທະນາແບບຍືນຍົງ (SDGs) ແລະ ການຫຼຸດພົ້ນອອກຈາກສະຖານະພາບການເປັນປະເທດດ້ອຍພັດທະນາໃນປີ 2020.**

**ຂ້າພະເຈົ້າຫວັງຢ່າງຍິ່ງວ່າ, ຜົນຂອງກອງປະຊຸມໂຕະມົນປະຈຳປີ 2016 ນີ້ ກໍ່ຄືທຸກຄັ້ງທີ່ຜ່ານມາຈະສາມາດສ້າງຄວາມເຂົ້າໃຈ ເຊິ່ງກັນ ແລະ ກັນຢ່າງເລິກເຊິ່ງລະຫວ່າງທຸກພາກສ່ວນ ທີ່ມີສ່ວນຮ່ວມໃນການພັດທະນາ ແລະ ສາມາດນຳເອົາໄປຜັນຂະຫຍາຍ ເປັນແຜນວຽກ, ແຜນງານຢ່າງລະອຽດ ແລະ ສາມາດຕິດຕາມໄດ້ຢ່າງມີປະສິດທິຜົນ ໂດຍສະເພາະຕໍ່ກັບບັນດາ 4 ຫົວຂໍ້ຈຸດສຸມທີ່ກ່າວມານັ້ນ.**

ວັນທີ 21/11/2016

**ທ້າຍສຸດນີ້, ຂ້າພະເຈົ້າຂໍສະແດງຄວາມຂອບໃຈເປັນຢ່າງສູງມາຍັງແຂວງວຽງຈັນ ທີ່ໄດ້ເປັນເຈົ້າພາບທີ່ດີ, ຂໍສະແດງຄວາມຮູ້ບຸນຄຸນຢ່າງສູງ ຕໍ່ການສະໜັບສະໜູນ ແລະ ການຊ່ວຍເຫລືອຂອງບັນດາປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນ ກໍ່ຄື ຄູ່ຮ່ວມພັດທະນາຕ່າງໆ ທີ່ໄດ້ປະກອບສ່ວນອັນສຳຄັນ ທາງດ້ານທຶນຮອນ ແລະ ດ້ານ ເຕັກນິກວິຊາການ ເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII (2016-2020) ລວມທັງວຽກງານການບັນລຸເປົ້າໝາຍການພັດທະນາແບບ ຍືນຍົງ (SDGs) ຂອງ ສປປ ລາວ ໃຫ້ປະສົບຜົນສຳເລັດ ແລະ ຫວັງຢ່າງຍິ່ງວ່າ ບັນດາຄູ່ ຮ່ວມພັດທະນາ ຈະສືບຕໍ່ໃຫ້ການສະໜັບສະໜູນຊ່ວຍເຫລືອ ສປປ ລາວ ໃນ ການຈັດຕັ້ງປະຕິບັດແຜນພັດທະນາດັ່ງກ່າວ ໃຫ້ປະກົດຜົນເປັນຈິງ ນຳພາປະເທດ ຊາດຫລຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ໃນປີ 2020.**

**ດ້ວຍໄມຕີຈິດ ແລະ ມູນເຊື້ອການຮ່ວມມືທີ່ດີງາມ ລະຫວ່າງ ສປປ ລາວ ກັບບັນດາປະເທດ ເພື່ອນມິດ, ອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາ, ຂ້າພະເຈົ້າ ເຊື່ອໝັ້ນວ່າ ກອງປະຊຸມຄັ້ງນີ້ ຈະໄດ້ຮັບຜົນສຳເລັດອັນຈົບງາມ ຕາມຈຸດປະສົງ ແລະ ເປົ້າໝາຍທີ່ວາງໄວ້.**

**ສຸດທ້າຍນີ້, ຂໍອວຍໄຊໃຫ້ພອນມາຍັງບັນດາທ່ານ ຈົ່ງມີສຸຂະພາບແຂງແຮງ, ປະສົບຜົນສຳເລັດໃນໜ້າທີ່ວຽກງານ ແລະ ມີຄວາມຜາສຸກທຸກປະການ.**

**ຂໍກ່າວເປີດ ກອງປະຊຸມ ການຈັດຕັ້ງປະຕິບັດຂະບວນການໂຕະມົນ ປະຈຳປີ 2016 ທີ່ແຂວງວຽງຈັນ ຢ່າງເປັນທາງການ ນັບແຕ່ວິນາທີນີ້ເປັນຕົ້ນໄປ.**

**- ຂໍຂອບໃຈ -**